# ໂຮງຮຽນວັນອາທິດ

**ວັນອາທິດທີ 13 ພຶສຈິກາ 2016 (11- 13- 2016)**

---

## ຄວາມກ້າຫານທີ່ບໍ່ສາມາດຢັບຢັ້ງໄດ້

ການກະທຳຢ່າງໃດທີ່ຖືວ່າເປັນຄວາມກ້າຫານທີ່ສຸດທີ່ທ່ານເຄີຍເຫັນ?

**ຈຸດສຳຄັນໃນບົດຮຽນ**: ພຣະເຈົ້າໃຫ້ເຮົາມີຄວາມກ້າຫານທີ່ຈະກ່າວພຣະຄຳຢ່າງບໍ່ຢ້ານສຳລັບພຣະຄຣິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ສ່ວນຫຼາຍພວກເຮົາຖືກສອນແຕ່ຍັງນ້ອຍວ່າ "ໃຫ້ຄິດກ່ອນຈຶ່ງເວົ້າ." ເຖິງຢ່າງໃດກໍຕາມ ບາງເທື່ອພວກເຮົາກໍຕ້ອງໄດ້ເວົ້າເຖິງແມ່ນເຮົາແລ້ວຮູ້ວ່າຄຳເວົ້າຂອງເຮົາຈະເຮັດໃຫ້ເຮົາມີບັນຫາ. ເຮົາຕ້ອງມີຄວາມກ້າຫານ.

ຈົ່ງພິຈາຣະນາເບິ່ງ ມັດທິວ ອາຢາຍກາ. ຂ່າວຍ້ອນຫຼັງໃນປີ 2015 ເມື່ອຊາຍ 21 ຄົນຈາກປະເທດເອຢິບຖືກລັກພາຕົວໄປແລະຖືກຕັດຄໍເພາະເຂົາເຈົ້າມີຄວາມເຊື່ອໃນພຣະເຢຊູຄຣິດ. ມັດທິວແມ່ນຄົນນຶ່ງໃນຄົນເຫຼົ່ານັ້ນທີ່ຖືກລັກພາຕົວໄປ ແຕ່ກັບເປັນວ່າລາວບໍ່ແມ່ນຄົນເອຢິບຫລືບໍ່ແມ່ນຄຣິສຕຽນ. ລາວພຽງແຕ່ທຳງານໃນລົບເບັງຮ່ວມກັນຊາຍ 20 ຄົນເທົ່ານັ້ນ.

ຢ່າງໃດກໍຕາມການປ່ຽນແປງຢ່າງນຶ່ງໄດ້ເກີດຂຶ້ນ, ໃນວັນແຫ່ງຊາຕາກັມອັນໂຫດຮ້າຍນັ້ນ. ເຂົາເຈົ້າໄດ້ຄຸເຂົ່າລົງທີ່ຫາດຊາຍໂດຍເພັຊຄາດຢືນຢູ່ທາງຫຼັງ. ແຕ່ລະຄົນໄດ້ຖືກບັງຄັບໃຫ້ປະຕິເສດຄວາມເຊື່ອຂອງເຂົາເຈົ້າ. ແຕ່ລະຄົນຕາຍຍ້ອນຮັບວ່າຕົນເຊື່ອໃນອົງພຣະເຢຊູຄຣິດ. ເມື່ອເພັຊຄາດອວ່າຍມາຫາມັດທິວແລະອອກຄຳສັ່ງຢ່າງດຽວກັນ, ລາວເວົ້າວ່າ, "ພຣະເຈົ້າຂອງເຂົາເຈົ້າກໍແມ່ນພຣະເຈົ້າຂອງຂ້ອຍ" !

ຄວາມກ້າຫານທີ່ບໍ່ສາມາດຢັບຢັ້ງໄດ້. ພວກເຮົາໄດ້ເຫັນເປໂຕແລະໂຢຮັນຢູ່ໃນພຣະທັມກິຈການບົດທີ 4, ແລະຄວາມກ້າຫານທີ່ບໍ່ສາມາດຢັບຢັ້ງໄດ້ນີ້ໄດ້ສືບທອດຕໍ່ເນື່ອງມາເຖິງຄົນອື່ນເຊັ່ນ ມັດທິວ ອາຢາຍກາ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

## <u>ສຶກສາພຣະຄັມພີ</u>

**1. <u>ກິຈການ 4: 1-3:</u>**

*[1]ຂະນະ ທີ່ເປໂຕກັບໂຢຮັນຍັງກ່າວກັບພົລເມືອງຢູ່ ພວກປະໂຣຫິດ, ກັບນາຍທະຫານຮັກສາພຣະວິຫານ, ແລະພວກ*
*ຊາດູກາຍເຂົ້າມາຫາທ່ານທັງສອງ. [2]ເຂົາຂັດໃຈໃນການທີ່ທ່ານທັງສອງໄດ້ສັ່ງສອນແລະປະກາດແກ່ພົລເມືອງເຖິງ*
*ເຣື່ອງການຄືນມາຈາກຕາຍ ໂດຍອ້າງວ່າພຣະເຢຊູຄືນພຣະຊົນແລ້ວ. [3]ເຂົາຈຶ່ງຈັບທ່ານທັງສອງໄປຂັງໄວ້ໃນຄຸກຈົນ*
*ເຖິງມື້ໜ້າເພາະເປັນເວລາຄ່ຳແລ້ວ.*

ເໝືອນດັ່ງທີ່ພວກເຮົາເຫັນໃນກິຈການບົດ 3, ການເຮັດການອັສຈັນໃນການປິ່ນປົວຊາຍເປັນງ່ອຍ ເປັນການເປີດປະຕູສຳລັບເປໂຕແລະໂຢຮັນໃຫ້ປະກາດເຣື່ອງພຣະເຢຊູຄຣິດ. ເປໂຕສວຍໃຊ້ໂອກາດນັ້ນປະກາດຂ່າວປະເສີດ.

ນີ້ເປັນໂອກາດສຳລັບເປໂຕ. ເມື່ອພຣະເຢຊູຖືກຈັບໄປແລະຖືກດຳເນີນຄະດີຂໍ້ກ່າວຫາ, ເປໂຕປະຕິເສດພຣະອົງສາມຄັ້ງ(ລູກາ 22: 54- 62 ). ແຕ່ດຽວນີ້ເປໂຕໄດ້ພິສູດຄວາມກ້າຫານຂອງເພິ່ນ ຊຶ່ງແຕ່ກ່ອນນັ້ນເພິ່ນໄດ້ລົ້ມເຫຼວ. ເປໂຕໄດ້ກາຍເປັນສີລາ(ຫີນ)ເປັນເປໂຕທີ່ມີຄວາມກະຕືລືລົ້ນແລະກ້າຫານ.

ຍິ່ງໄປກວ່ານັ້ນ, ເປໂຕໄດ້ພິສູດໃຫ້ເຫັນຄວາມກ້າຫານທີ່ບໍ່ສາມາດຢັບຢັ້ງເພິ່ນໄດ້ຕໍ່ໜ້າຂອງບຸກຄົນເຫລົ່ານັ້ນທີ່ຂູ່ເຂັນເພິ່ນແຕ່ກ່ອນ. ຕລອດເຖິງການທີ່ເພິ່ນໄດ້ເທສນາກ່ຽວກັບຜູ້ນຳຄົນຢິວທີ່ຂ້າພຣະເມສາໃຫ້ຕາຍ ແລະການທີ່ພຣະເຈົ້າຊົງດົນບັນດານໃຫ້ພຣະອົງເປັນຄືນມາຈາກຕາຍ, ເດົາເບິ່ງດູວ່າແມ່ນໃຜທີ່ສເນີຕິວ?

- **ປະໂຣຫິດ.** ແມ່ນບັນດາຜູ້ນຳ ທີ່ບໍຣິຫານວຽກງານໃນພຣະວິຫານ.
- **ນາຍທະຫານຮັກສາພຣະວິຫານ.** ຊາຍຄົນນີ້ເປັນຫົວໜ້າທະຫານຄົນສຳຄັນ.
- **ພວກຊາດູກາຍ.** ອຳນາດທາງສັງຄົມແລະການເມືອງນີ້ຢູ່ໃນກຸ່ມຄົນຢິວສັງຄົມຊັ້ນສູງທີ່ບໍ່ເຊື່ອໃນການເປັນຄືນມາຈາກຕາຍ. ລູກາໄດ້ໃຫ້ຂໍ້ສັງເກດເຫັນວ່າ ພວກເຂົາມີຄວາມທຸກຮ້ອນໃຈເມື່ອໄດ້ຍິນຄົນເວົ້າເຣື່ອງການເປັນຄືນມາຈາກຕາຍ( ຂໍ້ 2 ).

ພຣະເຢຊູກ່າວວ່າ, “ແຕ່ ທ່ານທັງຫຼາຍຈະໄດ້ຮັບຂອງພຣະຣາຊທານຣິດເດດເມື່ອພຣະວິນຍານບໍຣິສຸດຈະສະເດັດມາເຖິງພວກທ່ານ ແລະພວກທ່ານຈະເປັນພະຍານຝ່າຍເຮົາ ( ກິຈການ 1:8). ໃນເວລານີ້ເປໂຕໄດ້ຢືນຂຶ້ນດ້ວຍຣິດອຳນາດແລະກ່າວພຣະທັມດ້ວຍໃຈກ້າຫານ.

ການຕໍ່ຕ້ານທີ່ເປໂຕແລະໂຢຮັນປະເຊີນເປັນການສະແດງຄວາມກ້າຫານຂອງພວກເພິ່ນ. ຄວາມກ້າຫານເປັນເໝືອນເພັດຢູ່ເທິງຜ້າກຳມະຍີ່ສີດຳ, ມັນສິ່ງແສງສະທ້ອນຕອບໂຕ້ຄວາມມືດຂອງສະຖານະການ. ຄວາມກ້າຫານມີສ່ວນກັບການປະເຊີນໜ້າແລະໃນຄວາມທົນທຸກທໍຣະມານທີ່ອາດຈະເກີດຂຶ້ນ. ຄວາມກ້າຫານແມ່ນການຢືນຂຶ້ນເພື່ອພຣະຄຣິດ ເມື່ອທ່ານຮູ້ແລ້ວວ່າທ່ານຈະຕ້ອງມີການສູນເສັຽ(ຈ່າຍຄ່າ)ໃນການເຮັດເຊັ່ນນັ້ນ.

ສຳລັບເປໂຕແລະໂຢຮັນ, ຄ່າຈ່າຍແມ່ນບັນຫາທີ່ມີກັບພວກອຳນາດການປົກຄອງແລະຖືກຂັງຄຸກຄືນນຶ່ງ. ເຫດການນີ້ເກີດຂຶ້ນໂດຍບໍ່ຕ້ອງປລາດໃຈເພາະພຣະເຢຊູໄດ້ບອກກັບພວກເພິນແຕ່ກ່ອນແລ້ວ,“ຖ້າເຂົາຂົ່ມເຫງເຮົາ ເຂົາກໍຈະຂົ່ມເຫງທ່ານທັງຫລາຍເໝືອນກັນ” (ໂຢຮັນ 15: 20 ).

ພວກເຮົາສາມາດຈະຍອມຮັບກັບການປະເຊີນໜ້າຢ່າງນັ້ນເມື່ອພວກເຮົາປະກາດເຣື່ອງພຣະເຢຊູ, ແຕ່ພວກເຮົາບໍ່ສາມາດໃຫ້ສິ່ງເຫລົ່ານັ້ນເຮັດໃຫ້ເຮົາມິດງຽບຢູ່.

## 2. <u>ກິຈການ 4: 8-12</u>:

*[8]ຂະນະນັ້ນເປໂຕເຕັມໄປດ້ວຍພຣະວິນຍານບໍຣິສຸດ ຈຶ່ງຕອບວ່າ, “ພວກທ່ານຜູ້ປົກຄອງພົລເມືອງແລະເຖົ້າແກ່ທັງຫລາຍເອີຍ. [9]ວັນນີ້ຖ້າທ່ານທັງຫລາຍຈະໂຈດຖາມຂ້າພະເຈົ້າທັງສອງ ເຖິງຄຸນຄວາມດີທີ່ໄດ້ເຮັດແກ່ຄົນພິການຜູ້ນັ້ນວ່າ ລາວໄດ້ດີປົກກະຕິດ້ວຍຢ່າງໃດ. [10]ກໍໃຫ້ທ່ານທັງຫລາຍກັບບັນດາພົລເມືອງອິສຣາເອນຊາບວ່າ ໂດຍພຣະນາມຂອງພຣະເຢຊູຄຣິດໄທນາຊາເຣັດ ທີ່ທ່ານທັງຫລາຍໄດ້ຕອກຄຶງໄວ້ທີ່ໄມ້ກາງແຂນ ທີ່ພຣະເຈົ້າໄດ້ຊົງບັນດານໃຫ້ຄືນພຣະຊົນ ດ້ວຍພຣະອົງນັ້ນແຫລະ, ຄົນຜູ້ນີ້ຈຶ່ງດີປົກກະຕິຢືນຢູ່ຕໍ່ໜ້າພວກທ່ານ. [11]ພຣະອົງນີ້ແຫລະ, ‘ເປັນຫີນທີ່ພວກທ່ານຜູ້ເປັນພວກຊ່າງກໍໄດ້ປະຖິ້ມບໍ່ຍອມໃຊ້ຊຶ່ງໄດ້ກາຍເປັນຫີນເສົາເອກແລ້ວ.’ [12]ໃນຜູ້ອື່ນຄວາມລອດພົ້ນບໍ່ມີ ດ້ວຍວ່າບໍ່ມີນາມຊື່ອື່ນໃດທົ່ວໃຕ້ຟ້າ ທີ່ຊົງປະທານແກ່ມະນຸດ ເພື່ອໃຫ້ເຮົາທັງຫລາຍຕ້ອງໄດ້ໃນພົ້ນ.”*

ຜູ້ນຳທາງສາສນາຢິວໄດ້ຖາມຄຳຖາມນຶ່ງຕໍ່ເປໂຕແລະໂຢຮັນ: “ ໂດຍຣິດອັນໃດຫລືໂດຍນາມຊື່ຜູ້ໃດທີ່ພວກທ່ານເຮັດການນີ້?” (ຂໍ້ 7 ) ພວກເຂົາຕ້ອງການຮູ້ວ່າຊາຍງ່ອຍຄົນນັ້ນຫາຍດີໄດ້ຢ່າງໃດ.

ເປໂຕຕອບຄຳດຽວວ່າ: **"ພຣະເຢຊູຄຣິດ."**

ເປໂຕອ້າງເຖິງ ພຣະທັມເພງສັຣເສີນ 118: 22, ກ່ຽວກັບກ້ອນຫີນທີ່ຖືກນາຍຊ່າງປະຖິ້ມແລະກາຍເປັນຫີນເສົາເອກ, ເພິ່ນອ້າງເຖິງ " ກ້ອນຫີນທີ່ນາຍຊ່າງປະຖິ້ມ" ເຂົາໄດ້ຂ້າພຣະເມສີອາຂອງເຂົາ. ເປໂຕໄດ້ກ້າວເຂົ້າໄປອີກຂັ້ນນຶ່ງດ້ວຍຄວາມຈິງ: "ໃນຜູ້ອື່ນຄວາມລອດພົ້ນບໍ່ມີ ດ້ວຍວ່າບໍ່ມີນາມຊື່ອື່ນໃດທົ່ວໃຕ້ຟ້າ ທີ່ຊົງປະທານແກ່ມະນຸດ ເພື່ອໃຫ້ເຮົາທັງຫລາຍຕ້ອງໄດ້ພົ້ນ."

ທຸກວັນນີ້, ຊາວອະເມຣິກັນຫລາຍກວ່າເຄິ່ງນຶ່ງເຊື່ອວ່າມີຫຼາຍທາງທີ່ໄປເຖິງສວັນໄດ້. ອີກຈຳນວນເຄິ່ງນຶ່ງຄືຜູ້ທີ່ເຊື່ອວ່າມີພຽງທາງດຽວທີ່ຈະໄປສວັນ ບໍ່ແມ່ນໝົດທຸກຄົນເຊື່ອວ່າພຣະເຢຊູເປັນທາງນັ້ນພຽງເທົ່ານັ້ນ. ແມ່ນກະທັ້ງຢູ່ໃນຄຣິສຕະຈັກດຽວກັນ, ຍັງມີຄຣິສຕຽນຈຳນວນຫລາຍທີ່ລັ່ງເລໃຈວ່າ ບໍ່ແມ່ນພຣະເຢຊູພຽງທາງດຽວທີ່ຈະນຳພາໄປເຖິງຄວາມລອດພົ້ນ.

ການກ່າວອ້າງດັ່ງທີ່ເປໂຕກ່າວນັ້ນທີ່ວ່າ "ໃນຜູ້ອື່ນຄວາມລອດພົ້ນບໍ່ມີ" ຄຳເວົ້ານີ້ເໝືອນເປັນການລູບໜ້າຂອງບັນດາຜູ້ທີ່ສ້າງຄວາມດີຢ່າງສັດຊື່ແລະສແວງຫາພຣະເຈົ້າໃນທາງອື່ນ. ນັ້ນຄືຄົນທີ່ໃຈແຄບແມ່ນບໍ!

ຫຼືວ່າ "ເປັນຄົນທີ່ຍອມຟັງຄວາມຄິດເຫັນຂອງຄົນອື່ນ" ຄວນຈະໝາຍຄວາມວ່າເຮັດກັບຄົນອື່ນດ້ວຍຄວາມນັບຖື ໂດຍບໍ່ກ້າວກ່າຍຄວາມເຊື່ອຂອງເຂົາເຈົ້າ. ເຖິງຢ່າງໃດກໍຕາມ, ຄວາມໝາຍນີ້ໄດ້ປ່ຽນໄປແລ້ວ, ຊຶ່ງໝາຍເຖິງຍອມຮັບວ່າທຸກຄວາມຄິດເຫັນແລະທຸກຄວາມເຊື່ອມີຄ່າເທົ່າກັນ. ແຕ່ໄດ້ບິດເບືອນໄປເປັນຄວາມກ່ຽວຂ້ອງກັບກົດເກນທາງດ້ານສິນທັມທີ່ກ່າວວ່າ: "ຄວາມເຊື່ອຂອງເຮົາດີກວ່າຫລືຊຸ່ນຮ້າຍກວ່າ, ຜິດຫລືຖືກ, ນັ້ນເປັນພຽງຄວາມແຕກຕ່າງ."

ຄວາມຈິງໃນພຣະຄັມພີໄດ້ປະຕິເສດຄວາມຄິດຂ້າງເທິງນີ້. ພຣະເຢຊູເອງເວົ້າວ່າ "ເຮົາເປັນທາງນັ້ນ, ເປັນຄວາມຈິງແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກມາທາງເຮົາ" (ໂຢຮັນ 14:6). ຖ້າມກາງຜູ້ສ້າງຕັ້ງສາສນາຕ່າງໆ ໃນໂລກ, ພຣະເຢຊູພຽງຜູ້ດຽວເທົ່ານັ້ນທີ່ກ່າວອ້າງພຣະອົງເອງວ່າເປັນພຣະເຈົ້າ (ໂຢຮັນ 10:30; 14:10-11). ພຣະເຢຊູຊົງກ່າວເພີ້ມເຕີມອີກວ່າ ພຣະອົງລົງມາເພື່ອຕາຍໄຖ່ຄວາມຜິດບາບຂອງມະນຸດໂລກ ( ມາຣະໂກ 10:45). ການຊົງເປັນຄືນມາຈາກຕາຍຂອງພຣະອົງພິສູດໃຫ້ເຫັນເຖິງຄຳກ່າວອ້າງຂອງພຣະອົງ (ມັດທາຍ 12:38-42).

ເປໂຕ ເວົ້າຄວາມຈິງກ່ຽວກັບພຣະເຢຊູຄຣິດ. ບໍ່ແມ່ນເພິ່ນເປັນຄົນໃຈແຄບ, ແຕ່ເພິ່ນໄດ້ເວົ້າຄວາມຈິງດ້ວຍຄວາມຮັກ.

## 3 <u>ກິຈການ 4:19-20:</u>

*[19]ຝ່າຍເປໂຕກັບໂຢຮັນໄດ້ຕອບເຂົາວ່າ, "ທີ່ຈະຟັງຄຳຂອງພວກທ່ານຫລາຍກວ່າຈະຟັງຄຳຂອງພຣະເຈົ້າຈະເປັນການຊອບທັມຕໍ່ພຣະພັກພຣະເຈົ້າຫລື ຂໍພວກທ່ານຈົ່ງພິຈາຣະນາເບິ່ງ. [20]ເພາະວ່າຈະເປັນໄປບໍ່ໄດ້ ທີ່ຈະໃຫ້ພວກຂ້າພະເຈົ້າອຳໄວ້ໃນສິ່ງທີ່ໄດ້ເຫັນແລະໄດ້ຍິນແລ້ວ."*

ບາງຄົນບໍ່ສາມາດຍອມຮັບວ່າຕົນເອງຜິດ. ມີຄົນງ່ອຍຄົນນຶ່ງຢືນຂຶ້ນດ້ວຍຂາສອງຂ້າງທີ່ແຂງແຮງຕໍ່ໜ້າຜູ້ນຳທາງສາສນາ. ເຂົາເຫັນການອັສຈັນ, ແຕ່ຈິດໃຈຂອງພວກເຂົາຍັງແຂງກະດ້າງຢູ່. ເຂົາບໍ່ມີຄວາມສາມາດທີ່ຈະອະທິບາຍໃນສິ່ງທີ່ເປໂຕກັບໂຢຮັນເຮັດ ມີແຕ່ສາມາດເວົ້າຂົ່ມຂູ່ເທົ່ານັ້ນ . ດ້ວຍການຫ້າມບໍ່ໃຫ້ເປໂຕແລະໂຢຮັນກ່າວອອກນາມຊື່ພຣະເຢຊູ(ຂໍ້ 18 ), ພວກເຂົາໄດ້ວາງກົດເກນຂັ້ນພື້ນຖານວ່າພວກອັກຄະສາວົກຄວນຈະສືບຕໍ່ເທສນາເຣື່ອງຂ່າວປະເສີດຫລືບໍ່.

ເປໂຕແລະໂຢຮັນພ້ອມທີ່ຈະຕອບໂຕ້ດ້ວຍຄວາມກ້າຫານ: "ພວກເຮົາບໍ່ສາມາດຢຸດຢັ້ງໃນການປະກາດໃນສິ່ງພວກເຮົາເຫັນແລະໄດ້ຍິນ."

ຄຣິສຕຽນທຸກວັນນີ້ມີຄວາມຈຳເປັນທີ່ອ່ອນແອ ເພື່ອຢາກເຮັດໃຫ້ຄົນອື່ນມັກແລະເຫັນດີນຳ. ຫຼາຍຕໍ່ຫຼາຍຄັ້ງ

ພວກເຮົາເປັນເໝືອນປ້າຍທີ່ອ່ານວ່າ: "ຂ້າພະເຈົ້າເປັນຜູ້ເຮັດໃຫ້ຄົນເພິ່ງພໍໃຈ, ເຫັນດີນຳຂ້າພະເຈົ້າບໍ?" ແຕ່ຄວາມຄິດເຫັນຂອງຄຣິສຕຽນທີ່ເຂັ້ມແຂງເວົ້າວ່າ:

- ຂ້າພະເຈົ້າບໍ່ໄດ້ຮັບໃຊ້ເພື່ອໃຫ້ຄົນອື່ນເຫັນວ່າຖືກຕ້ອງ, ຂ້າພະເຈົ້າຮັບໃຊ້ເພາະຂ້າພະເຈົ້າເປັນຜູ້ທີ່ຖືກຕ້ອງ.
- ຂ້າພະເຈົ້າບໍ່ໄດ້ຮັບໃຊ້ເພື່ອໃຫ້ຄົນອື່ນເຫັນດີນຳ, ຂ້າພະເຈົ້າຮັບໃຊ້ເພາະຂ້າພະເຈົ້າເປັນຜູ້ເຫັນວ່າດີ.
- ຂ້າພະເຈົ້າບໍ່ໄດ້ຮັບໃຊ້ເພາະຂ້າພະເຈົ້າບໍ່ມີຄວາມປອດພັຍ. ຂ້າພະເຈົ້າຮັບໃຊ້ເພາະຂ້າພະເຈົ້າມີຄວາມປອດພັຍໃນພຣະຄຣິດ.

ຄວາມເຫັນດ້ວຍຂອງພຣະເຈົ້າແມ່ນສຳຄັນທັງໝົດ. ຄວາມຄິດເຫັນຂອງຄົນອື່ນຈະເຂົ້າມາແລະອອກໄປ, ແຕ່ຄວາມຮັກຂອງພຣະເຈົ້າບໍ່ເຄີຍປ່ຽນແປງແລະບໍ່ມີເງື່ອນໄຂ. ພວກເຮົາສາມາດຢືນຂຶ້ນກັບພຣະອົງໂດຍບໍ່ຖືກຊັດໄປຊັດມາ. ເປັນດ້ວຍເຫດໃດ? ກໍເພາະວ່າພຣະອົງຊົງຢືນເພື່ອເຮົາ, ພຣະອົງຊົງຕາຍເພື່ອເຮົາ, ແລະພຣະອົງຊົງເປັນຄືນມາ. ພວກເຮົາຈຶ່ງເປັນຂອງພຣະອົງ.

ການປະກາດຂ່າວປະເສີດຢ່າງບໍ່ຢຸດຢັ້ງ ໄດ້ຮຽກເອີ້ນໃຫ້ເຮົາມີຄວາມກ້າຫານທີ່ບໍ່ຢຸດຢັ້ງເຊັ່ນດຽວກັນ.

## ນຳໃຊ້ໃນຊີວິດ

ທ່ານຈະສະແດງຄວາມກ້າຫານຂອງທ່ານຢ່າງໃດໃນອາທິດນີ້ ໃນຖານະເປັນຜູ້ຕິດຕາມອົງພຣະເຢຊູຄຣິດ? ຈົ່ງພິຈາຣະນາເບິ່ງຄຳແນະນຳນີ້.

- **ທຳໃຫ້ພຣະເຈົ້າພໍພຣະທັຍ.** ເວລາຊ່ວງສຸດທ້າຍຂອງແຕ່ລະມື້, ຈົ່ງປະເມີນຜົນການປະພຶດແລະອຸປະນິສັຍຂອງທ່ານໂດຍການຕອບຄຳຖາມນີ້. " ຂ້າພະເຈົ້າໄດ້ໃຊ້ຊີວິດເພື່ອໃຫ້ເປັນທີ່ພໍໃຈຂອງຜູ້ໃດໃນມື້ນີ້?" ຈົ່ງປະພຶດຕົນໃຫ້ເປັນທີ່ພໍພຣະທັຍພຣະເຈົ້າ ແທນທີ່ຈະໃຫ້ເປັນທີ່ພໍໃຈມະນຸດ.
- **ຈົ່ງເອົາໃຈໃສ່ໃນການອ່ານ.** ຂໍ້ມູນເປັນອົງປະກອບທີ່ສຳຄັນຕໍ່ຄວາມກ້າຫານ. ເພື່ອໃຫ້ເຂົ້າໃຈດີກວ່າເປັນດ້ວຍເຫດໃດພຣະເຢຊູຈຶ່ງເປັນພຽງທາງດຽວໄປເຖິງສວັນ. ອ່ານເຣື່ອງພຣະເຢຊູນອກຈາກພຣະອື່ນໆ: ການກ່າວອ້າງອັນແນ່ນອນຂອງຄຣິສຕຽນທີ່ຂຽນໂດຍ ຣໍວີ ແຊກຂາຣີຢາ (ທີ່ພິມອອກໃນປີ 2002)
- **ລົງມືປະຕິບັດ.** ຈົ່ງຄົ້ນຄວ້າແລະຫາສະຖານທີ່ໃນຊຸມຊົນຂອງທ່ານ ຫຼືຣັດທີ່ຂ່າວປະເສີດຍັງບໍ່ໄດ້ປະກາດ. ຈົ່ງເລີ້ມຕົ້ນປ່ຽນແປງນະໂຍບາຍນັ້ນ:ຂຽນຈົດໝາຍເຖິງຫ້ອງການຄະນະຣັຖບານ, ເຂົ້າປະຊຸມຮ່ວມກັບສາທາຣະນະຊົນແລະເວົ້າອອກໃນຄວາມຄິດເຫັນຂອງທ່ານ, ເຂົ້າຮ່ວມກຸ່ມທີ່ທຳງານປ່ຽນສິ່ງທີ່ຜິດໃຫ້ເປັນທີ່ຖືກຕ້ອງ.

ຄຣິສຕຽນໃນອະເມຣິກາແລະວັດທະນາທັມຊາວຕາວັນຕົກ ຂໍຂອບພຣະຄຸນພຣະເຈົ້າທີ່ພວກເຮົາບໍ່ໄດ້ພົບການເກືອດຫ້າມເທົ່າໃດຈາກການແບ່ງປັນຂ່າວປະເສີດ ຫຼືພົບຕົວເອງຄຸເຂົ່າໃນຫາດຊາຍຖືກຈໍ່ດ້ວຍປາຍປືນ. ເຖິງປານນັ້ນພວກເຮົາຍັງສາມາດສະແດງຄວາມກ້າຫານທີ່ບໍ່ສາມາດຢັບຢັ້ງໄດ້ເພື່ອເປັນເຄື່ອງໝາຍແກ່ຜູ້ທີ່ເຊື່ອຕໍ່ໄປເປັນເວລາດົນນານ. ທ່ານຈະເຮັດໄດ້ບໍ?

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**